ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*************************

ສຳນັກງານນາຍົກລັດຖະມົນຕີ

ເລກທີ 196 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 21.08.2006

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍການບິນພົນລະເຮືອນ ສະບັບເລກທີ 01/ສພຊ, ລົງວັນທີ 19 ພຶດສະພາ 2005;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 220/ນຍ, ລົງວັນທີ 19 ພະຈິກ 1998;
- ອີງຕາມ ການສະເໜີ ຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 2139/ ຄຂປກ, ລົງວັນທີ 23 ມິຖຸນາ 2006 ແລະ ຂອງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 101/ທປຄ.ກພລ, ລົງວັນທີ 31 ກໍລະກົດ 2006.

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ເພື່ອເປັນບ່ອນອີງ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະດັ່ງກ່າວ ແລະ ແນໃສ່ສ້າງຄວາມເຂັ້ມແຂງ, ຄວາມອາດສາມາດ ໃຫ້ແກ່ອົງການຈັດຕັ້ງລັດ ໃນການປ້ອງກັນ ແລະ ແກ້ໄຂເຫດຮ້າຍທີ່ອາດຈະເກີດຂຶ້ນ ຊຶ່ງເປັນການຂົ່ມຂູ່ຕໍ່ຄວາມປອດໄພ ຂອງການບິນພົນລະເຮືອນໃນ ສປປ ລາວ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

ຄຳວ່າ "ເຫດຮ້າຍທີ່ເກີດຂຶ້ນ ເຊິ່ງຂົ່ມຂູ່ຕໍ່ຄວາມປອດໄພ ຂອງການບິນພົນລະເຮືອນ" ໝາຍເຖິງການກະທຳຂອງຄົນບໍ່ດີ ທີ່ມີຈຸດປະສົງຂົ່ມຂູ່ຕໍ່ຄວາມປອດໄພ ຫລື ສ້າງຄວາມເສຍຫາຍໃຫ້ແກ່ຊີວິດ ແລະ ຊັບສິນຂອງຜູ້ໂດຍສານ, ຈຸບິນ ຫລື ບຸກຄົນອື່ນ ເຊັ່ນ: ການກໍ່ການຮ້າຍຈີ້ ຫລື ຍຶດເຮືອບິນ, ການຂູ່ ວາງລະເບີດຢູ່ໃນ ຫລື ນອກເຮືອບິນ, ຢູ່ໃນ ຫລື ນອກອາຄານຜູ້ໂດຍສານ ແລະ ການກໍ່ການຮ້າຍອື່ນໆ ທີ່ຂົ່ມຂູ່ຕໍ່ຄວາມປອດໄພ ຫລື ສ້າງຄວາມເສຍຫາຍໃຫ້ແກ່ການບິນພົນລະເຮືອນ.

## ໝວດທີ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ເປັນອົງການຈັດຕັ້ງ ຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີໃນດ້ານວຽກງານປ້ອງກັນ ແລະ ແກ້ໄຂຢ່າງມີປະສິດທິຜົນ ເຫດຮ້າຍທີ່ເກີດຂຶ້ນ ເຊິ່ງຂົ່ມຂູ່ຕໍ່ຄວາມປອດໄພ ຂອງການບິນ ພົນລະເຮືອນໃນ ສປປ ລາວ.

## ໝວດທີ III
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 4. ໜ້າທີ່**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ມີໜ້າທີ່ຕົ້ນຕໍ ດັ່ງນີ້ :

1. ປະກອບຄຳເຫັນ, ແນະນຳ ຫລື ສະເໜີໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງກ່ຽວກັບການກຳນົດນະໂຍບາຍ, ການວາງແຜນຍຸດທະສາດ, ແຜນການ ຫລື ໂຄງການຕ່າງໆ ພ້ອມທັງກຳນົດມາດຕະຖານ, ເງື່ອນໄຂ, ກຳນົດໝາຍ, ມາດຕະການ ແລະ ວິທີການຕ່າງໆ ເພື່ອປ້ອງກັນໄພ ແລະ ແກ້ໄຂເຫດຮ້າຍທີ່ອາດຈະເກີດຂຶ້ນ ທີ່ພົວພັນເຖິງຄວາມປອດໄພ ຂອງການບິນພົນລະເຮືອນໃນ ສປປ ລາວ.
2. ສະເໜີຕໍ່ລັດຖະບານ ຫລື ນາຍົກລັດຖະມົນຕີ ເພື່ອອອກກົດໝາຍ ຫລື ນິຕິກຳອື່ນໆທີ່ຈຳເປັນເພື່ອແກ້ໄຂຊ່ອງຫວ່າງ ທີ່ອາດຈະກໍ່ໃຫ້ເກີດມີການກໍ່ການຮ້າຍຂົ່ມຂູ່ ຕໍ່ຄວາມສະຫງົບ ແລະ ຄວາມປອດໄພດ້ານການບິນພົນລະເຮືອນ.
3. ເປັນໃຈກາງພົວພັນ, ປະສານງານ ກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ເພື່ອປ້ອງກັນ ຫລື ແກ້ໄຂເຫດຮ້າຍທີ່ເກີດຂຶ້ນ ນອກເໜືອຈາກຄວາມຮັບຜິດຊອບ ຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ .

**ມາດຕາ 5. ຂອບເຂດສິດ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ມີສິດດັ່ງນີ້:

1. ສັ່ງໃຫ້ຢຸດຕິຊົ່ວຄາວ ທຸກການເຄື່ອນໄຫວ ຂອງສະໜາມບິນ, ເຮືອບິນ ຫລື ຜູ້ໂດຍສານ ແລະ ນຳໃຊ້ທຸກມາດຕະການອັນຈຳເປັນ ເພື່ອປ້ອງກັນ ຫລື ແກ້ໄຂສະຖານະການສຸກເສີນ ໃນກໍລະນີເກີດເຫດຮ້າຍໃດໜຶ່ງຂຶ້ນ ທີ່ພົວພັນເຖິງຄວາມປອດໄພ ຂອງການບິນພົນລະເຮືອນ.
2. ລະດົມກຳລັງຕຳຫລວດ, ທະຫານ ແລະ ກຳລັງຮັກສາຄວາມປອດໄພອື່ນໆ ເຂົ້າໃນການຄວບຄຸມສະຖານະການ ຫລື ປາບປາມຄົນກໍ່ການຮ້າຍທີ່ຫວັງມ້າງເພ, ທຳລາຍຄວາມສະຫງົບ ແລະ ຄວາມປອດໄພ ຂອງການບິນພົນລະເຮືອນ.
3. ເປັນເຈົ້າການ ໃນການພິຈາລະນາຕົກລົງ, ແກ້ໄຂ ຫລື ສະເໜີລັດຖະບານ, ນາຍົກລັດຖະມົນຕີ ແກ້ໄຂຕາມແຕ່ລະກໍລະນີຢ່າງມີປະສິດທິຜົນ ແລະ ທ່ວງທັນກັບເວລາ ເມື່ອມີເຫດຮ້າຍເກີດຂຶ້ນ ແນໃສ່ຫລີກເວັ້ນ ຫຼື ຫລຸດຜ່ອນໃຫ້ຕ່ຳທີ່ສຸດ ຄວາມເສຍຫາຍຕໍ່ຊີວິດ, ຊັບສິນ ຂອງລັດ ແລະ ຂອງປະຊາຊົນ.
4. ອອກມຄຳສັ່ງ ແລະ ແຈ້ງການກະທັນຫັນ ເພື່ອໃຫ້ການຈັດຕັ້ງ ຫລື ບຸກຄົນປະຕິບັດຕາມ ແນໃສ່ປ້ອງກັນ ຫລື ແກ້ໄຂເຫດຮ້າຍເກີດຂຶ້ນ ທີ່ຂົ່ມຂູ່ຕໍ່ຄວາມປອດໄພ ຂອງການບິນພົນລະເຮືອນ.

## ໝວດທີ IV
## ໂຄງປະກອບການຈັດຕັ້ງ

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

1. ທ່ານ ລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ — ເປັນປະທານ;
2. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ — ເປັນຮອງປະທານ;
3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນຄວາມສະຫງົບ — ເປັນຮອງປະທານ;
4. ບັນດາທ່ານ ຮອງເຈົ້າແຂວງ ແລະ ຮອງເຈົ້າຄອງນະຄອນຫຼວງ — ເປັນກຳມະການ;
5. ທ່ານ ຫົວໜ້າຫ້ອງການ ກະຊວງຍຸຕິທຳ — ເປັນກຳມະການ;
6. ທ່ານ ຫົວໜ້າຫ້ອງການ ກະຊວງການຕ່າງປະເທດ — ເປັນກຳມະການ;
7. ທ່ານ ຫົວໜ້າຫ້ອງການ ກະຊວງສາທາລະນະສຸກ — ເປັນກຳມະການ;
8. ທ່ານ ຫົວໜ້າກົມ ການບິນພົນລະເຮືອນ — ເປັນກຳມະການ ຜູ້ປະຈຳການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 7. ໂຄງປະກອບກົງຈັກຊ່ວຍວຽກ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ມີກົງຈັກຊ່ວຍວຽກບໍລິຫານປະຈຳວັນ ໂດຍແມ່ນກົມການບິນພົນລະເຮືອນ, ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຫ້ອງການປະຈຳ ທັງເປັນກອງເລຂາ, ມີພະນັກງານປະຈຳການຈຳນວນໜຶ່ງ ຕາມຄວາມເໝາະສົມ.

## ໝວດທີ V
## ແບບແຜນວິທີເຮັດວຽກ

**ມາດຕາ 8. ແບບແຜນວິທີເຮັດວຽກ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ເຄື່ອນໄຫວວຽກງານ ແບບບໍ່ປະຈຳການ ແລະ ຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ. ກອງປະຊຸມຄົບຄະນະຕາມປົກກະຕິຂອງຄະນະກຳມະການດັ່ງກ່າວ ແມ່ນຈັດຂຶ້ນໃນກຳນົດສາມເດືອນຕໍ່ໜຶ່ງເທື່ອ. ໃນກໍລະນີມີເຫດຮ້າຍເກີດຂຶ້ນ ຫຼື ມີຄວາມຈຳເປັນ ກໍສາມາດຈັດກອງປະຊຸມຫລາຍເທື່ອໄດ້. ກອງປະຊຸມດຳເນີນການປຶກສາຫາລືແລະ ຕົກລົງບັນຫາເປັນໝູ່ຄະນະ ໂດຍຖືເອົາຕາມສຽງສ່ວນຫລາຍ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ ປະທານຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ເປັນຜູ້ຜັນຂະຫຍາຍ, ກຳນົດ, ມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດ ໃຫ້ແກ່ຄະນະກຳມະການແຕ່ລະທ່ານ ແລະ ໃຫ້ກອງເລຂາ.

**ມາດຕາ 10. ຕາປະທັບ ແລະ ງົບປະມານ**

ຄະນະກຳມະການແຫ່ງຊາດ ເພື່ອຮັກສາຄວາມປອດໄພການບິນພົນລະເຮືອນ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າວຽກງານທາງລັດຖະການ ແລະ ມີງົບປະມານສະເພາະ ເພື່ອໃຊ້ຈ່າຍເຂົ້າໃນວຽກງານຮັກສາຄວາມປອດໄພການບິນພົນລະເຮືອນ ແລະ ວຽກງານບໍລິຫານວຽກປະຈຳວັນ ໂດຍຂຶ້ນແຜນລາຍຈ່າຍປະຈຳປີ ນຳຮ່ວງງົບປະມານ ຂອງກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫລວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມສະດວກ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ຂໍ້ກຳນົດ ແລະ ລະບຽບການໃດທີ່ຂັດກັບ ດຳລັດ ສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປລາວ**

ບົວສອນ ບຸບຜາວັນ